ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 4205 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 22 ຕຸລາ 2026

ໜັງສືແຈ້ງເຊີນປະມູນ

1. ກະຊວງການເງິນ ໄດ້ຮັບງົບປະມານ ລົງທຶນຂອງລັດ ປີ 2026 ເພື່ອກໍ່ສ້າງ, ສ້ອມແປງຕຶກສຳນັກງານຂອງ ກະຊວງການເງິນ, ຫ້ອງການກະຊວງການເງິນ ຈຶ່ງຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີຄຸນວຸທິເໝາະສົມເຂົ້າ ຍື່ນຊອງປະມູນ ສຳລັບໂຄງການກໍ່ສ້າງ, ສ້ອມແປງພື້ນຖານໂຄງລ່າງ ຂອງກະຊວງການເງິນ ປີ 2026;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນ ທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງ ຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ, ມີໃບຢັ້ງຢືນການເສຍອາກອນ ປີ 2025 ແລະ ມີເງື່ອນໄຂທີ່ ໄດ້ກຳນົດໄວ້ເອກະສານປະມູນ (ຄັດຕິດມາພ້ອມນີ້);
4. ບໍລິສັດທີ່ມີຄຸນວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການກະຊວງການເງິນ ໂທ 021 412 409 ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ຫ້ອງການກະຊວງການເງິນ, ຕາມເວລາໂມງວຽກ ທາງລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ຫ້ອງການກະຊວງ ການເງິນ, ເລີ້ມແຕ່ວັນທີ 22 ຕຸລາ 2026 ຫາ 22 ພະຈິກ 2026, ໃນລາຄາຊອງລະ 5,000,000 ກີບ (ຫ້າ ລ້ານກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ 13:00 ໂມງ ຂອງວັນທີ 23 ພະຈິກ 2026. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາ ທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 23 ພະຈິກ 2026 ທີ່ຫ້ອງປະຊຸມຊັ້ນ 1 ຕຶກ B ກະຊວງການເງິນ ໂດຍຊ້ອງໜ້າຄະນະ ກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ ຕາມສະຖານທີ່ຂ້າງເທິງນີ້;
7. ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% ຂອງລາຄາ ສະເໜີເຂົ້າປະມູນ.

ຫົວໜ້າຫ້ອງການ

ກະຊວງການເງິນ ຫ້ອງການ

ພົງສະຫວັນ ລາດທິຈັກ